german
cooperation
DEUTSCHE ZUSAMMENARBEIT

Implemented by
giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

In cooperation with:
MEKONG RIVER COMMISSION
MRC
FOR SUSTAINABLE DEVELOPMENT

# ການສະໜັບສະໜູນຄະນະກຳມາທິການແມ່ນ້ຳຂອງສາກົນ

## ການເຮັດວຽກຮ່ວມກັນ ເພື່ອພັດທະນາອ່າງແມ່ນ້ຳຂອງໃຫ້ຍືນຍົງ

### ຄວາມເປັນມາ

ອ່າງແມ່ນ້ຳຂອງຕອນລຸ່ມມີຄວາມສຳຄັນຫຼາຍ ຕໍ່ການດຳລົງຊີວິດຂອງພົນລະເມືອງທີ່ລຸ່ມແມ່ນ້ຳຂອງຫຼາຍກວ່າ 60 ລ້ານຄົນ ໃນນັ້ນລວມເອົາ ປະຊາຊົນຈາກປະເທດ ກຳປູເຈຍ, ລາວ, ໄທ ແລະ ຫວຽດນາມ. ປະຊາຊົນເຫລົ່ານັ້ນອາໄສການປະມົງ ແລະ ການກະສິກຳ ໃນການທຳມາຫາກິນເປັນຫລັກ.

ແມ່ນ້ຳຂອງ ມີຄວາມສຳຄັນຢ່າງໃຫຍ່ຫຼວງຕໍ່ເສດຖະກິດ ໂດຍສະເພາະແມ່ນຜູ້ທີ່ດຳລົງຊີວິດຢູ່ຕາມລຽບແມ່ນ້ຳຂອງ ເພາະວ່າມັນເປັນແຫຼ່ງພື້ນຖານທີ່ສະໜອງອາຫານ ແລະ ສ້າງລາຍໄດ້ໃຫ້ແກ່ພວກເຂົາ. ນອກຈາກແມ່ນ້ຳຂອງຈະມີທ່າແຮງຕໍ່ການຄົມມະນາຄົມຂົນສົ່ງ, ການທ່ອງທ່ຽວ, ການຜະລິດພະລັງງານ, ການຄ້າ ແລະ ການລົງທຶນແລ້ວ, ແມ່ນ້ຳຂອງ ຍັງເປັນຮາກຖານຫຼັກໃນການຂະຫຍາຍໂຕ ແລະ ພັດທະນາ ດ້ານເສດຖະກິດ-ສັງຄົມໃຫ້ແກ່ບັນດາປະເທດທີ່ຕັ້ງຢູ່ຕາມລຽບແມ່ນ້ຳອີກດ້ວຍ.

ເຖິງຢ່າງໃດກໍຕາມ, ອ່າງແມ່ນ້ຳຂອງ ກໍຍັງປະເຊີນໜ້າກັບບັນຫາທ້າທາຍຫຼາຍຢ່າງ ທີ່ເປັນໄພຂົ່ມຂູ່ ຕໍ່ການພັດທະນາພາກພື້ນໃຫ້ຍືນຍົງ. ການຂະຫຍາຍຕົວຢ່າງໄວວາ ທາງດ້ານປະຊາກອນ ແລະ ດ້ານເສດຖະກິດ ນັບມື້ຍິ່ງເພີ່ມຄວາມກົດດັນຕໍ່ຊັບພະຍາກອນນ້ຳ ເນື່ອງຈາກຄວາມຮຽກຮ້ອງຕ້ອງການ ທາງດ້ານສະບຽງອາຫານ, ພະລັງງານ ແລະ ຜະລິດຕະພັນສິນຄ້າທີ່ເພີ່ມຂຶ້ນ. ຫຼາຍໆບົດສຶກສາ ກໍໄດ້ຢັ້ງຢືນວ່າ ປະລິມານປາຫຼຸດລົງ, ຊີວະນາໆພັນຫຼຸດລົງ, ໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງເພີ່ມທະວີຄູນຄວາມຮ້າຍແຮງ ແລະ ເກີດຂຶ້ນເລື້ອຍໆ, ແລະ ເຂດສາມຫຼ່ຽມປາກແມ່ນ້ຳຂອງ ກໍເລີ່ມຈົມລົງເທື່ອລະໜ້ອຍຍ້ອນລະດັບນ້ຳທະເລສູງຂຶ້ນ. ສະພາບດິນຟ້າອາກາດກໍຜັນປວນປ່ຽນແປງ ແລະ ຍິ່ງເຮັດໃຫ້ຄວາມກົດດັນເຫຼົ່ານີ້ຮ້າຍແຮງຂຶ້ນນັບມື້.

ແຕ່ໃນທ້າຍທີ່ສຸດ ການພັດທະນາ ແລະ ຄຸ້ມຄອງຊັບພະຍາກອນນ້ຳໃນອ່າງແມ່ນ້ຳຂອງ ໃຫ້ຍືນຍົງໄດ້ ກໍຕ້ອງຮັກສາຄວາມສົມດຸນລະຫວ່າງ ຜົນປະໂຫຍດທາງດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ ໄປພ້ອມໆກັນ. ອີງຕາມລັກສະນະເຂດແດນແມ່ນ້ຳຂອງ ແມ່ນມີຊາຍແດນຕິດຈອດກັບ 6 ປະເທດ, ການຮັກສາຄວາມສົມດຸນດັ່ງກ່າວ ຈະເກີດຂຶ້ນໄດ້ ກໍຕໍ່ເມື່ອມີການຮ່ວມມືກັນເທົ່ານັ້ນ. ເນື່ອງຈາກວ່າ ການປະຕິບັດຂອງປະເທດໃດໜຶ່ງ ຍ່ອມຈະສົ່ງຜົນກະທົບ ຕໍ່ປະເທດອື່ນໆ ທີ່ຕັ້ງຢູ່ລຸ່ມແມ່ນ້ຳຂອງສະເໝີ.



*ແມ່ນ້ຳຂອງຕອນລຸ່ມ ຢູ່ໜ້າກອງເລຂາ MRC*
*ຮູບໂດຍ: © GIZ/MRC-GIZ Cooperation Programme*

| | |
|---|---|
| **ຊື່ໂຄງການ** | ໂຄງການ ການຮ່ວມມືທາງດ້ານ ຊັບພະຍາກອນນ້ຳຂ້າມຊາຍແດນ |
| **ໃຫ້ທຶນໂດຍ** | ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງ ສະຫະພັນເຢຍລະມັນ (BMZ) |
| **ເຂດເປົ້າໝາຍຂອງໂຄງການ** | ກຳປູເຈຍ, ຫວຽດນາມ, ໄທ ແລະ ສປປ ລາວ |
| **ຜູ້ຮ່ວມງານໂຄງການ** | ຄະນະກຳມາທິການແມ່ນ້ຳຂອງສາກົນ (MRC) |
| **ໄລຍະເວລາໂຄງການ** | ມັງກອນ 2019 - ທັນວາ 2021 |

ໃນປີ 1995 ບັນດາປະເທດ ຣາຊະອານາຈັກກຳປູເຈຍ, ສປປ ລາວ, ຣາຊະອານາຈັກໄທ ແລະ ສສ ຫວຽດນາມ ໄດ້ລົງນາມສ້າງຕັ້ງຄະນະກຳມາທິການແມ່ນ້ຳຂອງສາກົນຂຶ້ນ (MRC) ເພື່ອເປັນກົນໄກໃນການນຳໃຊ້ປະໂຫຍດຈາກໂອກາດການພັດທະນາ ແລະ ແກ້ໄຂບັນຫາທ້າທາຍ ໃນອ່າງລຸ່ມແມ່ນ້ຳຂອງຮ່ວມກັນ. ນັບຕັ້ງແຕ່ນັ້ນເປັນຕົ້ນມາ ຄະນະກຳມາທິການແມ່ນ້ຳຂອງສາກົນ ກໍໄດ້ຈັດຕັ້ງປະຕິບັດ ອຸທິດແຮງ ແລະ ສະຕິປັນຍາເພື່ອປັບປຸງການຄຸ້ມຄອງຊັບພະຍາກອນນ້ຳໃຫ້ຍືນຍົງຕະຫຼອດມາ.

### ຈຸດປະສົງ

ການຮ່ວມມືລະຫວ່າງບັນດາປະເທດໃນເຂດລຸ່ມແມ່ນ້ຳຂອງ ທີ່ສະໜັບສະໜູນໂດຍຄະນະກຳມາທິການແມ່ນ້ຳຂອງສາກົນ (MRC) ມີສັກກະຍະພາບທີ່ເຂັ້ມແຂງຂຶ້ນ.

### ວິທີດຳເນີນວຽກງານ

GIZ ໃຫ້ການສະໜັບສະໜູນ MRC ເພື່ອແກ້ໄຂບັນຫາທ້າທາຍດ້ານການພັດທະນາ ໃນເຂດລຸ່ມແມ່ນ້ຳຂອງ ໂດຍສະເພາະແມ່ນການພັດທະນາ ດ້ານພະລັງງານໄຟຟ້ານ້ຳໃຫ້ຍືນຍົງ ແລະ ການປັບຕົວຕໍ່ການປ່ຽນແປງຂອງດິນຟ້າອາກາດ. ນອກຈາກນັ້ນ GIZ ກໍຍັງໄດ້ໃຫ້ການສະໜັບສະໜູນ ດ້ານການພັດທະນາອົງກອນຢ່າງຕໍ່ເນື່ອງ ລວມທັງການປັບປຸງ ດ້ານການຖ່າຍທອດຄວາມຮູ້ ແລະ ໜ້າທີ່ ດ້ານການບໍລິຫານຄຸ້ມຄອງວຽກງານຕ່າງໆຂອງ MRC ສູ່ບັນດາປະເທດສະມາຊິກ ແລະ ການປັບປຸງການຄຸ້ມຄອງດ້ານການເງິນ.

GIZ ຈັດຕັ້ງປະຕິດບັດວຽກຮ່ວມກັນໂດຍກົງ ກັບບັນດານັກຊ່ຽວຊານ ແລະ ຄະນະຜູ້ບໍລິຫານຂອງກອງເລຂາ MRC. ພ້ອມນັ້ນ ກໍຍັງໄດ້ໃຫ້ການສະໜັບສະໜູນ ຄະນະກຳມາທິການແມ່ນ້ຳຂອງແຫ່ງຊາດ ແຕ່ລະປະເທດ ທຸກເວລາທີ່ຕ້ອງການອີກດ້ວຍ.

ຍ້ອນການນຳໃຊ້ຍຸດທະສາດການຈັດຕັ້ງປະຕິບັດເຫຼົ່ານີ້ ຈຶ່ງເວົ້າໄດ້ວ່າໂຄງການ ມີສ່ວນຮ່ວມ ໃນການເຮັດໃຫ້ການຮ່ວມມືລະຫວ່າງບັນດາປະເທດ ໃນເຂດລຸ່ມແມ່ນ້ຳຂອງ ນັບມື້ນັບເຂັ້ມແຂງແໜ້ນແຟ້ນຂຶ້ນ.

## ສິ່ງທີ່ພວກເຮົາບັນລຸ

ໂດຍການສະໜັບສະໜຸນຂອງປະເທດເຢຍລະມັນ, MRC ໄດ້ປະກອບ ສ່ວນເຂົ້າໃນການປັບປຸງ ອົງຄວາມຮູ້ດ້ານຊັບພະຍາກອນນ້ຳ ແລະ ພັດທະນາວິໄສທັດ ອ່າງແມ່ນ້ຳຂອງຮ່ວມກັນຂຶ້ນ ເຮັດໃຫ້ MRC ກາຍເປັນອົງການທີ່ມີປະສິດທິພາບ ແລະ ພັດທະນາກົນໄກການຮ່ວມມື ກັບບັນດາປະເທດສະມາຊິກ ໄດ້ນັບມື້ນັບເຂັ້ມແຂງຂຶ້ນ.

ໃນປັດຈຸບັນ MRC ກໍກ້າວເຂົ້າສູ່ການເປັນອົງການຫນຶ່ງ ຂອງຫລາຍໆອົງການນຳໜ້າຂອງໂລກ ທາງດ້ານການຮ່ວມມືທາງດ້ານຊັບພະຍາກອນນ້ຳຂ້າມຊາຍແດນ ເຊິ່ງໄດ້ຮັບການສະໜັບສະໜູນດ້ານການເງິນ ແລະການເມືອງ ນັບມື້ນັບຫຼາຍຂຶ້ນ.

ຫວ່າງມໍ່ໆມານີ້ MRC ກໍໄດ້ປະສົບຜົນສຳເລັດວຽກງານຫຼາຍປະການດັ່ງລຸ່ມນີ້:

- ສຳເລັດການທົບທວນແຜນຍຸດທະສາດ MRC 2016-2020 ແບບລະອຽດ.
- ສຳເລັດຮ່າງບົດແນະນຳລາຍລະອຽດກ່ຽວກັບການປະຕິບັດການຕິດຕາມ ຜົນກະທົບດ້ານສິ່ງແວດລ້ອມຮ່ວມ (JEM) ຂອງເຂື່ອນໄຟຟ້າພະລັງງານນ້ຳແມ່ນ້ຳຂອງ.
- ສຳເລັດການເລີ່ມຕົ້ນປະຕິບັດ ໂຄງການທົດລອງຕິດຕາມສິ່ງແວດລ້ອມຮ່ວມ ທີ່ເຂື່ອນໄຊຍະບູລີ ແລະ ເຂື່ອນດອນສະໂຮງ.
- ສຳເລັດກຳນົດຫນ້າວຽກຊຸກຍູ້ວຽກງານຄຸ້ມຄອງໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງໃນຂົງເຂດຊາຍແດນ ຣາຊະອານາຈັກກຳປູເຈຍ - ຣາຊະອານາຈັກໄທ ຮ່ວມກັນ.
- ປະກອບສ່ວນເຂົ້າໃນການສ້າງ ແຜນຍຸດທະສາດ ພັດທະນາອ່າງແມ່ນ້ຳຂອງ 2021-2030.



*ຜູ້ເຂົ້າຮ່ວມຝຶກອົບຮົມ ວຽກງານປະມົງຂອງ ໂຄງການ ຮ່ວມກັນຕິດຕາມສິ່ງແວດລ້ອມຂອງແມ່ນ້ຳຂອງ. ເດືອນ ກຸມພາ, ທີ່ແຂວງຫລວງພະບາງ, ສປປ ລາວ*
*ຮູບໂດຍ: © GIZ/MRC-GIZ Cooperation Programme*

## ບົດບາດຍິງ-ຊາຍ ແລະ ການຄຸ້ມຄອງຊັບພະຍາກອນນ້ຳ

GIZ ໃຫ້ການສະໜັບສະໜູນ MRC ໃນການຜັນຂະຫຍາຍ ນະໂຍບາຍ ແລະຍຸດທະສາດກ່ຽວກັບ ບົດບາດຍິງ-ຊາຍ ຂອງ MRC ເຂົ້າໃນການຈັດຕັ້ງປະຕິບັດທຸກວຽກງານໃນແຕ່ລະລະດັບໃຫ້ເປັນຮູບປະທຳເຊັ່ນ: ລະດັບປະຕິບັດວຽກງານ, ລະດັບບໍລິຫານອົງກອນ ແລະ ລະດັບຍຸດທະສາດ. ຄຽງຄູ່ກັບວຽກງານອື່ນໆ, GIZ ຍັງໄດ້ສະໜັບສະໜູນ MRC ໃນການວິເຄາະກ່ຽວກັບ ແລະການສ້າງແຜນປະຕິບັດງານ ດ້ານບົດບາດ ຍິງ-ຊາຍ (GAP), ການເຊື່ອມສານວຽກງານບົດບາດຍິງ-ຊາຍ ແລະ ຄວາມອ່ອນໄຫວ ເຂົ້າໃນແຜນຍຸດທະສາດພັດທະນາອ່າງແມ່ນ້ຳ 2021-2030 ແລະ ແຜນຍຸດທະສາດຂອງອົງການແມ່ນນ້ຳຂອງສາກົນ 2021-2025, ຮ່າງຄູ່ມືການປະຕິດບັດວຽກງານບົດບາດຍິງ-ຊາຍ ແລະ ຄວາມອ່ອນໄຫວ ເພື່ອໃຫ້ສາມາດສືບຕໍ່ສະຫນັບສະຫນູນວຽກງານເຊື່ອມສານດ້ານບົດບາດ ຍິງ-ຊາຍ ໃນຫນ້າວຽກຫລັກ ຂອງ MRC ອີກນຳ.

ນອກຈາກນັ້ນ GIZ ກໍໄດ້ໃຫ້ການສະໜັບສະໜູນປັບປຸງໂຕຊີ້ວັດດ້ານບົດບາດ ຍິງ-ຊາຍ ໃນແຜນຍຸດທະສາດ MRC, ເຮັດໃຫ້ MRC ສາມາດຜັນຂະຫຍາຍວຽກງານການສົ່ງເສີມ ບົດບາດຍິງ-ຊາຍ ເຂົ້າໃນກິດຈະກຳທີ່ສຳຄັນຕ່າງໆໄດ້ແບບສະເໝີຕົ້ນສະເໝີປາຍ ແລະ ເປັນໄປແບບຕໍ່ເນື່ອງ. ພ້ອມນັ້ນ MRC ກໍຍັງສາມາດຕິດຕາມຄວາມຄືບໜ້າ ວຽກງານການສົ່ງເສີມບົດບາດຍິງ-ຊາຍ ໄດ້ຢ່າງເປັນລະບົບອີກດ້ວຍ. ນອກຈາກນັ້ນ, ໂຄງການ GIZ ໃນໄລຍະປະຈຸບັນນີ້ ກໍຍັງໄດ້ເນັ້ນໃສ່ ການເຊື່ອມສານບົດບາດ ຍິງ-ຊາຍ ເຂົ້າໃນການວາງແຜນມາດຕະການຫຼຸດຜ່ອນ ໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ. ໃນເວລາດຽວກັນ ຍຸດທະສາດທີ່ຈະຖືກຈັດຕັ້ງປະຕິບັດໃນຕົວຈິງ ແມ່ນຂຶ້ນກັບມາດຕະການຫຼຸດຜ່ອນບູລິມະສິດ ທີ່ທາງປະເທດສະມາຊິກຈະເປັນຜູ້ກຳນົດ.




*ຄວາມສົມດຸນຂອງພະນັກງານ ຍິງ-ຊາຍ ໃນ MRC*

### ກ່ຽວກັບ GIZ

ການບໍລິການຂອງ GIZ ແມ່ນອີງໃສ່ຄວາມຊ່ຽວຊານໃນລະດັບພາກພື້ນ ແລະ ຄວາມຊຳນານດ້ານວິຊາການ ພ້ອມທັງຄວາມຮູ້ດ້ານການຄຸ້ມຄອງບໍລິຫານ ທີ່ໄດ້ຜ່ານການທົດລອງ ແລະ ທົດສອບມາແລ້ວ. ໃນນາມເປັນວິສາຫະກິດຂອງລັດ, ພວກເຮົາຊ່ວຍ ລັດຖະບານເຢຍລະມັນ ໃຫ້ບັນລຸຈຸດປະສົງໃນຂົງເຂດ ການຮ່ວມມືສາກົນເພື່ອການພັດທະນາແບບຍືນຍົງ.

ກະລຸນາເຂົ້າເບິ່ງໃນເວັບໄຊທ໌ຂອງພວກເຮົາ www.giz.de ສຳລັບຂໍ້ມູນເພີ່ມເຕີມ ກ່ຽວກັບ ວຽກງານຂອງ GIZ ໃນອາຊີ ແລະ ທົ່ວໂລກ.


| | |
|---|---|
| ຈັດພິມໂດຍ | Deutsche Gesellschaft für Internationale Zusammenarbeit (GIZ) GmbH<br>ສຳນັກງານຂຶ້ນທະບຽນ ບອນ ແລະ ເອຈ໌ບອນ, ປະເທດເຢຍລະມັນ<br>ໂຄງການ ການຮ່ວມມືທາງດ້ານຊັບພະຍາກອນນ້ຳຂ້າມຊາຍແດນ<br>ຕູ້ ປ.ນ. 9233<br>ນະຄອນຫຼວງວຽງຈັນ, ສປປ ລາວ<br>ໂທ: +856 21 263 263 ext. 3061<br>ແຟັກ: +856 21 312 408<br>ອີເມວ: mrc@giz.de<br>www.giz.de/laos (EN); www.giz.de/laos-la (LA) |
| ລົງວັນທີ | ມີນາ 2021 |
| ອອກແບບໂດຍ | ພະແນກປະຊາສຳພັນ ຫ້ອງການ GIZ ປະຈຳລາວ, ນະຄອນຫຼວງວຽງຈັນ |
| ຮູບຖ່າຍໂດຍ | GIZ/MRC-GIZ Cooperation Programme |
| ຂຽນໂດຍ | ໄຊປັນຍາ ເຊັດ |
| ບຸກຄົນຕິດຕໍ່ | ປ.ອ. ເບີທຼອງ ມີເນີຍ<br>(bertrand.meinier@giz.de) |

GIZ ຮັບຜິດຊອບຕໍ່ເນື້ອໃນສິ່ງພິມດັ່ງກ່າວ

| | |
|---|---|
| ໃນນາມຂອງ | ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ (BMZ) |